ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງໄຊຍະບູລີ

ເລກທີ 61 /ສພຂ.ຊຍ
ໄຊຍະບູລີ, ວັນທີ 28 ສິງຫາ 2023

# ມະຕິ
# ກອງປະຊຸມສະພາປະຊາຊົນແຂວງ
# ວ່າດ້ວຍການຮັບຮອງເອົາ ບົດລາຍງານ ຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍ ປີ 2023

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015 (ສະບັບປັບປຸງ ປີ 2015), ມາດຕາ 77 ກ່ຽວກັບສິດ ແລະ ໜ້າທີ່ ຂອງສະພາປະຊາຊົນຂັ້ນແຂວງ;
- ອີງຕາມ ກົດໝາຍວ່າດ້ວຍ ການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ, ມາດຕາ 60 ກອງປະຊຸມສະໄໝສາມັນປະຈຳທຶກເດືອນຕົ້ນປີ ຂອງສະພາປະຊາຊົນແຂວງ ສະບັບ ເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020;
- ອີງຕາມ ບົດລາຍງານຂອງອົງການປົກຄອງແຂວງ ໃນວັນທີ 23 ສິງຫາ 2023 ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023.

ຜ່ານການຄົ້ນຄວ້າ, ປະກອບຄຳເຫັນ, ພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ຕໍ່ບົດລາຍງານ ຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍ ປີ 2023. ໃນກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາປະຊາຊົນແຂວງ ຊຸດທີ II.

ກອງປະຊຸມຕົກລົງ:

**ມາດຕາ 1 ຮັບຮອງເອົາ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ຂອງແຂວງ 6 ເດືອນຕົ້ນປີ 2023**

ກອງປະຊຸມສະພາປະຊາຊົນແຂວງ ສະແດງຄວາມຊົມເຊີຍ ຕໍ່ອົງການປົກຄອງແຂວງ ທີ່ໄດ້ເອົາໃຈໃສ່ນຳພາ-ຊີ້ນຳ ໃນການຈັດຕັ້ງປະຕິບັດ ແຜນງົບປະມານແຫ່ງລັດ ຂອງແຂວງ ຢ່າງຕັ້ງໜ້າ ໃນການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈຳ 6 ເດືອນຕົ້ນປີ 2023 ດັ່ງນີ້:

1. **ດ້ານລາຍຮັບ**: ປະຕິບັດໄດ້ 954,12 ຕື້ກີບ, ເທົ່າກັບ 62,99% ຂອງແຜນການປີ, ໃນນີ້:
   - **ລາຍຮັບພູດສູນກາງ**: ປະຕິບັດໄດ້ 597,36 ຕື້ກີບ, ເທົ່າກັບ 59,14% ຂອງແຜນການປີ;
   - **ລາຍຮັບພາຍໃນແຂວງ**: ປະຕິບັດໄດ້ 356,75 ຕື້ກີບ, ເທົ່າກັບ 70,68% ຂອງແຜນການປີ, ໃນນີ້:

+ ສ່ວຍສາອາກອນ: ປະຕິບັດໄດ້ 213,86 ຕື້ກີບ, ເທົ່າກັບ 48,55% ຂອງແຜນການປີ;

+ ຄຸ້ມຄອງຊັບສິນຂອງລັດ: ປະຕິບັດໄດ້ 142,89 ຕື້ກີບ, ເທົ່າກັບ 222,78% ຂອງແຜນການປີ;

- **ລາຍຮັບສູນກາງມອບໃຫ້ແຂວງ:** ປະຕິບັດໄດ້ 265,50 ຕື້ກີບ, ເທົ່າກັບ 97,53% ຂອງແຜນການປີ, ໃນນີ້: **ສ່ວຍສາອາກອນ** ປະຕິບັດໄດ້ 133,59 ຕື້ກີບ, ເທົ່າກັບ 62,85% ຂອງແຜນການປີ ແລະ ຊັບສິນ ປະຕິບັດໄດ້ 131,91 ຕື້ກີບ, ເທົ່າກັບ 221,03% ຂອງແຜນການປີ.

2. ດ້ານລາຍຈ່າຍ: ປະຕິບັດໄດ້ 272,92 ຕື້ກີບ, ເທົ່າກັບ 54,66% ຂອງແຜນການປີ;

**ມາດຕາ 2 ຮັບຮອງເອົາແຜນງົບປະມານແຫ່ງລັດ ຂອງແຂວງ 6 ເດືອນທ້າຍ ປີ 2023**

ກອງປະຊຸມຮັບຮອງ ແຜນວຽກຈຸດສຸມ ຕາມການສະເໜີຂອງອົງການປົກຄອງແຂວງ, ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ບັນລຸຕາມແຜນການໃນທ້າຍປີ 2023 ກອງປະຊຸມສະເໜີໃຫ້ ເອົາໃຈໃສ່ເພີ່ມເຕີມ ດັ່ງນີ້:

1. **ດ້ານລາຍຮັບ:** ສູ້ຊົນເກັບລາຍຮັບ 6 ເດືອນທ້າຍປີ 2023 ໃຫ້ໄດ້ 611,48 ຕື້ກີບ, ເທົ່າກັບ 40,37% ຂອງແຜນການປີ, ຄາດຄະເນໝົດປີ 1.565,60 ຕື້ກີບ, ເທົ່າກັບ 103,36% ຂອງແຜນການປີໃນນີ້:

- **ລາຍຮັບພູດສູນກາງ:** ໃຫ້ໄດ້ 463,49 ຕື້ກີບ, ເທົ່າກັບ 45,89% ຂອງແຜນການປີ, ຄາດຄະເນໝົດປີປະຕິບັດໃຫ້ໄດ້ 1.060,86 ຕື້ກີບ, ເທົ່າກັບ 105,04%;
- **ລາຍຮັບພາຍໃນແຂວງ:** ໃຫ້ໄດ້ 147,98 ຕື້ກີບ, ເທົ່າກັບ 29,32 % ຂອງແຜນການປີ, ຄາດຄະເນໝົດປີປະຕິບັດໃຫ້ໄດ້ 504,73 ຕື້ກີບ, ເທົ່າກັບ 100%, ໃນນີ້:

+ ສ່ວຍສາອາກອນ: ສູ້ຊົນໃຫ້ໄດ້ 147,72 ຕື້ກີບ, ເທົ່າກັບ 33,53% ຂອງແຜນການປີ, ຄາດຄະເນໝົດປີໃຫ້ໄດ້ 361,58 ຕື້ກີບ, ເທົ່າກັບ 82,08%.

+ ຄຸ້ມຄອງຊັບສິນຂອງລັດ: ສູ້ຊົນໃຫ້ໄດ້ 259,57 ລ້ານກີບ, ເທົ່າກັບ 0,40% ຂອງແຜນການປີ, ຄາດຄະເນໝົດປີໃຫ້ໄດ້ 143,15 ຕື້ກີບ, ເທົ່າກັບ 223,01%.

- **ລາຍຮັບສູນກາງມອບໃຫ້ແຂວງ:** ສູ້ຊົນປະຕິບັດໃຫ້ໄດ້ 103,82 ຕື້ກີບ, ເທົ່າກັບ 38,14% ຂອງແຜນການປີ, ຄາດຄະເນໝົດປີ 369,33 ຕື້ກີບ, ເທົ່າກັບ 135,67%.

2. **ດ້ານລາຍຈ່າຍ:** ເອົາໃຈໃສ່ຄຸ້ມຄອງລາຍຈ່າຍໃນ 6 ເດືອນທ້າຍປີ ໃຫ້ຢູ່ໃນລະດັບ 342,02 ຕື້ກີບ, ເທົ່າກັບ 68,50% ຂອງແຜນການປີ, ຄາດຄະເນໝົດປີໃຫ້ໄດ້ 614,51 ຕື້ກີບ, ເທົ່າກັບ 123,08% ຂອງແຜນການເບື້ອງຕົ້ນ.
3. ສຸມໃສ່ຈັດຕັ້ງປະຕິບັດ 7 ໜ້າວຽກຈຸດສຸມ ທີ່ໄດ້ກຳນົດໄວ້ໃນແຜນຈັດຕັ້ງປະຕິບັດວາລະແຫ່ງຊາດກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ສະບັບເລກທີ 191/ຈຂ.ຊຍ.

**ມາດຕາ 3 ຮັບຮອງເອົາມາດຕະການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ຂອງແຂວງ 6 ເດືອນທ້າຍ ປີ 2023**

ກອງປະຊຸມ ເຫັນດີເປັນເອກະພາບຮັບຮອງເອົາ 5 ມາດຕະການດ້ານລາຍຮັບ ແລະ 6 ມາດຕະການ ດ້ານລາຍຈ່າຍ, ບັນດາມາດຕະການໃນແຕ່ລະດ້ານ ຂອງແຜນງົບປະມານແຫ່ງລັດ ຕາມການສະເໜີຂອງອົງການປົກຄອງແຂວງ, ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ຂອງແຂວງ ປະຈຳ 6 ເດືອນທ້າຍປີ 2023 ບັນລຸຕາມແຜນການທີ່ວາງໄວ້, ກອງປະຊຸມສະເໜີໃຫ້ອົງການປົກຄອງແຂວງ ເອົາໃຈໃສ່ຈັດຕັ້ງປະຕິບັດມາດຕະການເພີ່ມເຕີມ ດັ່ງນີ້:

1. ກອງປະຊຸມສະເໜີໃຫ້ອົງການປົກຄອງແຂວງ ສູ້ຊົນປະຕິບັດແຜນລາຍຮັບ ແລະ ຄຸ້ມຄອງລາຍຈ່າຍປະຈຳປີ, ພ້ອມທັງສືບຕໍ່ປະຕິບັດ 5 ມາດຕະການດ້ານລາຍຮັບ ແລະ 4 ມາດຕະການດ້ານລາຍຈ່າຍ ທີ່ໄດ້ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງ ຊຸດທີ II;
2. ສືບຕໍ່ນຳໃຊ້ເຄື່ອງມືທີ່ທັນສະໄໝ ດ້ວຍລະບົບດີຈິຕ້ອນ ເຂົ້າໃນການຄຸ້ມຄອງລາຍຮັບ-ລາຍຈ່າຍ ງົບປະມານໃຫ້ກວມເອົາທຸກຫົວໜ່ວຍເປົ້າໝາຍ, ຂະຫຍາຍຖານລາຍຮັບ ເຂົ້າສູ່ອາກອນມູນຄ່າເພີ່ມ (Taxris) ໃຫ້ໄປຕາມແຜນທີ່ກຳນົດໄວ້, ເອົາໃຈໃສ່ປະຕິບັດວິໄນແຜນການ-ການເງິນ ຢ່າງເຂັ້ມງວດ.
3. ສືບຕໍ່ຊຸກຍູ້ແກ້ໄຂການປະຕິບັດລາຍຮັບ-ລາຍຈ່າຍ ງົບປະມານທີ່ຕິດພັນກັບຜົນການກວດສອບ ປະຈຳປີຜ່ານມາ ໃຫ້ມີທ່າອ່ຽງເພີ່ມຂຶ້ນ;
4. ເພີ່ມທະວີວຽກງານຕິດຕາມກວດກາ ການປະຕິບັດແຜນລາຍຮັບ-ລາຍຈ່າຍງົບປະມານໃຫ້ໄປຕາມກົດໝາຍ ແລະ ລະບຽບການກຳນົດຢ່າງເຂັ້ມງວດ;
5. ສືບຕໍ່ປະຕິບັດດຳລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ 205/ນຍ, ລົງວັນທີ 22 ກໍລະກົດ 2022 ວ່າດ້ວຍການປະຢັດ ແລະ ຕ້ານການຟຸມເຟືອຍ.

**ມາດຕາ 4 ການຈັດຕັ້ງປະຕິບັດ**

1. ມອບໃຫ້ອົງການປົກຄອງແຂວງ ນຳພາ-ຊີ້ນຳ ບັນດາພະແນກການ, ອົງການລັດທຽບເທົ່າ ແລະ ອົງການປົກຄອງເມືອງ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ;
2. ມອບໃຫ້ ຄະນະປະຈຳສະພາປະຊາຊົນແຂວງ, ບັນດາຄະນະກຳມະການ, ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ຕິດຕາມກວດກາ ການຈັດຕັ້ງປະຕິບັດມະຕິສະບັບນີ້ ຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 5 ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາປະຊາຊົນແຂວງ

ເພັງນີລັນ ຄຳພັນເພັງ